ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ສມຍ.ທຫລ ອວຍພອນຄະນະຜູ້ວ່າການ ເນື່ອງໃນວັນແມ່ຍິງສາກົນ ຄົບຮອບ 116 ປີ



ໃນວັນທີ 12 ແລະ 17 ມີນາ 2026 ທີ່ ທະນາຄານແຫ່ງ ສປປ ລາວ (ທຫລ), ສະຫະພັນແມ່ຍິງທະນາຄານແຫ່ງ ສປປ ລາວ (ສມຍ.ທຫລ) ນຳພາໂດຍ ທ່ານ ນ. ຟອງຈິນດາ ແສງສຸລິວົງ ປະທານ ສມຍ.ທຫລ ພ້ອມດ້ວຍຄະນະ ໄດ້ເຂົ້າອວຍພອນຄະນະນຳເພດຍິງຂອງ ທຫລ ຄື: ທ່ານ ນ. ບຸນຄຳ ວໍລະຈິດ, ຄະນະເລຂາທິການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ຜູ້ວ່າການ ທຫລ ແລະ ທ່ານ ນ. ວັດທະນາ ດາລາລອຍ ຮອງເລຂາຄະນະບໍລິຫານງານພັກ, ຮອງຜູ້ວ່າການ ທຫລ, ຜູ້ຊີ້ນຳວຽກງານສາມອົງການຈັດຕັ້ງມະຫາຊົນ ເນື່ອງໃນໂອກາດວັນແມ່ຍິງສາກົນ ຄົບຮອບ 116 ປີ (8 ມີນາ 1910 - 8 ມີນາ 2026) ໂດຍມີຄະນະບໍລິຫານງານ ສມຍ.ທຫລ, ຕາງໜ້າຈາກຮາກຖານແມ່ຍິງທີ່ຂຶ້ນກັບ ສມຍ.ທຫລ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.




ໃນໂອກາດນີ້ ປະທານ ສມຍ. ທຫລ ໄດ້ລາຍງານໂດຍຫຍໍ້ສະພາບການເຄື່ອນໄຫວຂອງ ສມຍ.ທຫລ ໃນໄລຍະຜ່ານມາ ຊຶ່ງໄດ້ຍົກໃຫ້ເຫັນຜົນງານອັນພົ້ນເດັ່ນທີ່ຍາດມາໄດ້ໃນໜຶ່ງປີຜ່ານມາ ເປັນຕົ້ນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 03 ດີ ຂອງ ສະຫະພັນແມ່ຍິງລາວ; ນອກນີ້, ຍັງສຳເລັດການຄົ້ນຄ້ວາສ້າງແພັລດຟອມ ກຸ່ມຊື້-ຂາຍສິນຄ້າຂອງສາມອົງການຈັດຕັ້ງມະຫາຊົນ ເພື່ອສາມາດເປັນອີກຊ່ອງທາງໜຶ່ງ ໃນການພັດທະນາຊີວິດການເປັນຢູ່ໃຫ້ແມ່ຍິງ ແລະ ຄອບຄົວ ອີກດ້ວຍ.

ໃນໂອກາດທີ່ສຳຄັນນີ້, ການນຳເພດຍິງທັງສອງທ່ານ ຍັງໄດ້ໃຫ້ກຽດມີຄວາມເຫັນໂອ້ລົມຕໍ່ ສມຍ.ທຫລ ເພື່ອເປັນເຂັມຊີ້ທິດເຍືອງທາງໃນການເຄື່ອນໄຫວວຽກງານອົງການຈັດຕັ້ງແມ່ຍິງຂອງ ສມຍ.ທຫລ ເພື່ອຮັບປະກັນໝາກຜົນໃນການຈັດຕັ້ງປະຕິບັດວຽກງານສົ່ງເສີມບົດບາດແມ່ຍິງພາຍໃນຂະແໜງທະນາຄານໃນຕໍ່ໜ້າ ອີກດ້ວຍ.

**ພາບ ແລະ ຂ່າວ: ຫ້ອງການ ທະນາຄານແຫ່ງ ສປປ ລາວ**

**ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ**